

# ບົດສະເໜີໂຄງການຫຍໍ້
# ການຜະລິດຫໍ່ໄມ້ປຸງແຕ່ງ ແລະ ຜະລິດຕະພັນ ໄມ້ປ່ອງແປຮູບ (ຫໍ່ຫລອຍ ແລະ ຫໍ່ໄລ່).

NAFRI

The Agro-Biodiversity Initiative (TABI)

# ການຜະລິດໜໍ່ໄມ້ປຸງແຕ່ງ ແລະ ຜະລິດຕະພັນໄມ້ປ່ອງແປຮູບ (ໜໍ່ຫລອຍ ແລະ ໜໍ່ໄລ່).

## 1. ເປົ້າໝາຍ:

ເພື່ອຍົກລະດັບຊີວິດການເປັນຢູ່ ຂອງ ຊາວກະສິກອນ ໃນເຂດພູດອຍ ໂດຍພື້ນຖານເຮັດລະບົບການະລິດທີ່ເປັນມິດກັບປ່າໄມ້. ຊຶ່ງຈະສາມາດບັນລຸຜົນສຳເລັດໄດ້ ໂດຍສະໜອງຄວາມຊ່ວຍເຫລືອໃຫ້ແກ່ຊຸມຊົນໃນເຂດຊົນນະບົດພູດອຍ ໃຫ້ເຮັດການຄຸ້ມຄອງປ່າໄມ້ປ່ອງທຳມະຊາດ ແລະ ເຮັດການປູກໄມ້ປ່ອງຂຶ້ນໃໝ່ ເພື່ອເປົ້າໝາຍເກັບກູ້ ແລະ ປຸງແຕ່ງໜໍ່ໄມ້ ແລະ ລຳໄມ້ປ່ອງ. ຕົ້ນໄມ້ປ່ອງ ແມ່ນເກີດຂຶ້ນເປັນພຸ່ມໄມ້ອາຍຸຍາວ ແລະ ມັນຍັງສະໜອງຜົນປະໂຫຍດທີ່ໜ້າພູມໃຈ ກ່ຽວກັບ ອາຫານໂພຊະນາການ ແລະ ສ້າງລາຍຮັບໃຫ້ແກ່ຊຸມຊົນທ້ອງຖິ່ນໃນແຕ່ລະຮອບປີຈົນຕະຫລອດອາຍຸໄຂຂອງມັນ ໂດຍບໍ່ຈຳຕ້ອງປູກຂຶ້ນໃໝ່ກໍໄດ້. ຍັງມີສະພາບແວດລ້ອມໃນທາງບວກ ເຊັ່ນລວມມີ ການກັກທາດກາກບອນເຮືອນແກ້ວ ໄດ້ຫລາຍກ່ວາບັນດາຕົ້ນໄມ້ຢືນຕົ້ນອື່ນໆ; ຮາກຂອງມັນຍັງມີໂຄງສ້າງທີ່ແຂງແຮງຊ່ວຍຈັບຍຶດດິນບໍ່ໃຫ້ມີການເຊາະເຈື່ອນ. ມັນຍັງສາມາດປະກອບສ່ວນເຂົ້າໃນການຫລຸດຜ່ອນການເຮັດໄຮ່ແບບໝູນວຽນ ແລະ ເພີ້ມເນື້ອທີ່ປ່າປົກຫຸ້ມ ແລະ ພ້ອມກັນນັ້ນກໍເປັນການຮັບປະກັນຜົນປະໂຫຍດໃນທາງບວກໃຫ້ແກ່ການດຳລົງຊີວິດອີກດ້ວຍ.

## 2. ພາກສະເໜີລວມ:



ໄມ້ປ່ອງເປັນຊັບພະຍາກອນຊີວະນາໆພັນທີ່ສຳຄັນ ແລະ ຍັງຖືເອົາເປັນເຄື່ອງປາຂອງດົງທີ່ສຳຄັນຫລາຍຕໍ່ກັບເສດຖະກິດ ຂອງ ສປປ ລາວ. ມັນມີຄວາມຈຳເປັນຕໍ່ການດຳລົງດ້ານວັດທະນະທຳ ສັງຄົມ ເສດຖະກິດ ແລະ ຊີວິດການເປັນຢູ່ຂອງຊຸມຊົນໃນຊົນນະບົດ (ເປັນລາຍຮັບເປັນເງິນສົດ, ເປັນການຄໍ້າປະກັນດ້ານອາຫານ ແລະ ເປັນເຄື່ອງມືເຄື່ອງໃຊ້ຕ່າງໆ) ລວມທັງມີຄວາມສຳຄັນຕໍ່ສັງຄົມ ແລະ ວັດທະນະທຳອີກດ້ວຍ. ໄມ້ປ່ອງ ຍັງມີບົດບາດສຳຄັນດ້ານສິ່ງແວດລ້ອມ ຊຶ່ງລວມມີ ການຫລຸດຜ່ອນການເຊາະເຈື່ອນຂອງດິນ, ເປັນທີ່ຢູ່ອາໃສຂອງຊີວະນາໆພັນສັດ ແລະ ພືດຕ່າງໆ ແລະ ປະກອບສ່ວນເຂົ້າໃນການເກັບກັກທາດກາກບອນ ແລະ ຊ່ວຍເຂົ້າໃນການປ້ອງກັນການປ່ຽນແປງຂອງສະພາບພູມິອາກາດນຳອີກດ້ວຍ. ເນື້ອທີ່ປ່າໄມ້ປ່ອງໜຶ່ງເຮັກຕາຈະສາມາດເກັບກັກທາດກາກບອນໄດ້ເຖິງ 5 ໂຕນຕໍ່ໜຶ່ງປີ. ຢູ່ໃນ ສປປລ ມີເນື້ອທີ່ປ່າໄມ້ປ່ອງຫລາຍກ່ວາ 6,000 ເຮັກຕາ ແລະ ມີປະເພດໄມ້ປ່ອງທັງໝົດຫລາຍກ່ວາ 50 ຊະນິດພັນ. ໄມ້ປ່ອງເປັນ ໄມ້ຢືນຕົ້ນທີ່ເກີດຂຶ້ນເອງໃໝ່ດ້ວຍໜໍ່ເປັນແຕ່ລະປີ ຈຶ່ງເປປັນການສ້າງທາງເລືອກທີ່ມີຄຸນຄ່າສູງຢູ່ພາຍໃນລະບົບການຜະລິດໃນເຂດພູດອຍ.

ຕົ້ນໄມ້ປ່ອງ ເປັນຊະນິດພັນໄມ້ທີ່ໃຫຍ່ໄວ ແລະ ສາມາດຈຳແນກອອກໄປຕາມສອງກຸ່ມະລິດຕະພັນ ຄື: (1) ລຳໄມ້ປ່ອງ ທີ່ໃຊ້ທົດແທນໄມ້ຈິງ; ແລະ (2) ໜໍ່ໄມ້ປ່ອງ ເພື່ອເປປັນອາຫານ. ລຳໄມ້ປ່ອງ ສາມາດຜະລິດເປັນເຄື່ອງໃຊ້ໄດ້ຫລາຍຮ້ອຍຫລາຍພັນຢ່າງ ເຊັ່ນ: ໄມ້ກໍ່ສ້າງ, ໄມ້ເຄື່ອງເຮືອນ, ເຄື່ອງຫັດຖະກຳ, ກ້ານທູບ, ໄມ້ທູ່, ຖ່ານໄຟ, ເຈັ້ຽ, ເຄື່ອງຫລິ້ນ, ເຄື່ອງຕ້ອນຂອງຝາກ ແລະ ອັນນ້ອຍໆຄື ໄມ້ຈິ້ມແຂ້ວ ເປັນຕົ້ນ. ສ່ວນໜໍ່ໄມ້ ແມ່ນສາມາດປຸງແຕ່ງເປັນອາຫານເທົ່ານັ້ນທີ່ນິຍົມຫລາຍຢູ່ໃນເຂດພາກພື້ນອາຊີ. ຜະລິດຕະພັນຈາກໄມ້ປ່ອງ ໃນ ສປປລ ແມ່ນມີຄວາມສຳຄັນຫລາຍຢູ່ພາຍໃນ ແລະ ຕ່າງປະເທດ.

# 3. ເບື້ອງຫລັງຄວາມເປັນມາ:

ການຄ້າຂະລິດຕະພັນໄມ້ປ່ອງ ແມ່ນມີເພີ້ມຂື້ນຢູ່ຕະຫລອດ. ລຳໄມ້ປ່ອງ ແລະ ໜໍ່ໄມ້ປ່ອງໃນອາຫານ ແມ່ນມີຈຳໜ່າຍຢູ່ທັງຕະຫລາດພາຍໃນ ແລະ ຕ່າງປະເທດ. ຕະຫລາດຈຳໜ່າຍໜໍ່ໄມ້ປ່ອງ ສ່ວນໃຫຍ່ຈະເປັນຮູບແບບ ໜໍ່ແຫ້ງ, ໜໍ່ຕົ້ມ, ໜໍ່ດອງ ແລະ ອື່ນໆ ແຕ່ຂໍ້ມູນທີ່ເປັນທາງການ ກ່ຽວກັບ ການຜະລິດເພື່ອບໍລິໂພກ ແລະ ຈຳໜ່າຍ ແມ່ນບໍ່ສາມາດຮູ້ໄດ້ໝົດ. ໂຄງການຕາບີ ໄດ້ໃຫ້ການສະໜັບສະໜູນຊ່ວຍເຫລືອ ຊຸມຊົນທ້ອງຖິ່ນໃນສອງແຂວງ ຄື ແຂວງຊຽງຂວາງ ແລະ ແຂວງເຮັດທຸລະກິດການຜະລິດໄມ້ປ່ອງ ແລະ ໜໍ່ໄມ້ ເປັນສິນຄ້າ ຂອງ ສອງຊະນິດພັນທີ່ມີຄວາມສຳຄັນເປັນເອກະລັກສະເພາະຕົວ ຄື:

- ການຜະລິດໜໍ່ໄມ້ໄລ່ ຫລື Gigantochloa albociliata (Munro). ໄມ້ໄລ່ ເກີດມີຢູ່ຕາມທຳມະຊາດຫລາຍທີ່ສຸດແລ້ວ ແລະ ມີການຂະຫຍາຍພັນ ປລະ ປູກຕື່ງ ຢູ່ ແຂວງຊຽງຂວາງ; ແລະ
- ການຜະລິດໜໍ່ໄມ້ຫລອຍ ຫລື Indocalamus petelotii (A.Camus). ໄມ້ຫລອຍເກີດມີຢູ່ຕາມທຳມະຊາດເຊັ່ນກັນ ແລະ ມີການຂະຫຍາຍພັນ ປລະ ປູກຕື່ງ ຢູ່ ແຂວງຫົວພັນ.

ໂຄງການຕາບີ ໄດ້ໃຫ້ການສະໜັບສະໜູນສອງຍຸດທະສາດຂອງຂະແໜງການໄມ້ປ່ອງ ຄື: ຍຸດທະສສາດທີ່ໜຶ່ງ ແມ່ນເຮັດການອານຸລັກ ແລະ ຄຸ້ມຄອງປ່າໄມ້ປ່ອງແບບຍືນຍົງ. ຍຸດທະສາດທີ່ສອງ ແມ່ນ ການປູກໄມ້ປ່ອງຕື່ມເປັນສວນໃນຂົງເຂດໃຫ້ບ້ານເຮືອນ, ຕາມແຄມຫ້ວຍນ້ຳລຳທານ, ຕາມດິນປ່າເຫລົ່າ ແລະ ຕາມເນື້ອທີ່ປ່າໄມ້ຊຸດໂຊມຕ່າງໆ.

ຈາກປະສົບການຂອງ ໂຄງການຕາບີ ທີ່ໄດ້ໃຫ້ການສະໜັບສະໜູນແກ່ ຂະແໜງການໄມ້ປ່ອງ ດັ່ງກ່າວ ແມ່ນສາມາດມີສອງຜົນປະໂຫຍດທີ່ເປັນທາງບວກໂດຍກົງ ໃຫ້ແກ່ຊຸມຊົນໃນຮູບແບບທີ່ເປັນອາຫານ ແລະ ສ້າງລາຍຮັບເພີ້ມ ໄດ້ ເຊັ່ນ:

- ເມືອງພູກູດ, 2017, ມີຄອບຄົວເປົ້າໝາຍທັງໝົດ 105 ຄອບຄົວ (ໃນນັ້ນ ມີ ກົມມຸ 21 ຄອບຄົວ):
  - ໄດ້ເກັບກູ້ເອົາໜໍ່ໄມ້ໄລ່ສົດຈາກປ່າທຳມະຊາດໄດ້ທັງໝົດ 12,756 kg;
  - ເປັນອາຫານກິນຢູ່ ພາຍໃນຄອບຄົວ 7,025 kg, ລວມມູນຄ່າເທົ່າກັບ 7,025,000 kips);
  - ປຸງແຕ່ງເປັນສອງປະເພດສິນຄ້າຂາຍອອກ ເຊັ່ນ: ໜໍ່ໄມ້ຖົງ 4,331 ຖົງ ແລະ ໜໍ່ໄມ້ປີບ 140 ປີບ (10 kg/ປີບ);
  - ມູນຄ່າລາຍຮັບຈາກການຂາຍສອງຜະລິດຕະພັນປຸງແຕ່ງດັ່ງກ່າວ ໄດ້ 35,655,000 kips;
  - ບວກກັບມູນຄ່າໜໍ່ໄມ້ທີ່ເອົາເປັນອາຫານ 7,025,000 kips ກໍຈະມີລວມຍອດມູນຄ່າທັງໝົດ 42,680,000 kips (ສະເລ່ຍລາຍຮັບຕໍ່ໜຶ່ງຄອບຄົວ ກໍຈະໄດ້ຢູ່ໃນປະມານ 406,476 kips/ຄຄ);
- ເມືອງຫົວເມືອງ, 2018, ຄອບຄົວເປົ້າໝາຍ 101 ຄອບຄົວ:
  - ໄດ້ເກັບໜໍ່ຫລອຍສົດໄດ້ທັງໝົດ 69,169 kg;
  - ໃຊ້ເປັນອາຫານ 13,520 kg ເທົ່າກັບ 67,600,000 kips;
  - ຂາຍໜໍ່ໄມ້ສົດອອກ 55,649 kg ໃນລາຄາ 5,000 ກີບ/ກິໂລ ໄດ້ເງິນ 278,245,000 kips.
  - ມູນຄ່າລວມຍອດ 345,845,000 kips (3,424,208 kips/ຄຄ).



ເພີ້ມຈາກການນຳໃຊ້ໜໍ່ໄມ້ເປັນອາຫານແລ້ວ, ກໍຍັງມີການຂຸດຄົ້ນນຳໃຊ້ລຳໄມ້ປ່ອງອີກ. ໂຄງການ GRET/SNV ຢູ່ ແຂວງຫົວພັນ ໄດ້ເຮັດວຽກຮ່ວມກັບຫລາຍກ່ວາ 30 ບ້ານ ເຮັດການຜະລິດໄມ້ປ່ອງເປັນເຄື່ອງຫັດຖະກຳ ແລະ ໄມ້ປ່ອງແປຮູບອື່ນໆ ຂາຍໃຫ້ພໍ່ຄ້າເກັບຊື້ ເຊັ່ນຕົວຢ່າງ: ບາງຈຳນວນແມ່ນຂາຍສົ່ງອອກ ໄປ ປະເທດຫວຽດນາມ ແລະ ຂາຍໂດຍກົງໃຫ້ແກ່ພໍ່ຄ້າ ແລະ ຂາຍຢູ່ໃນງານຕະຫລາດນັດແຫ່ງຕ່າງໆ. ໃນປີ 2013 ໂຄງການ GRET ສ້າງລາຍຮັບເປັນເງິນ ໄດ້ທັງໝົດ 950 ລ້ານກີບ ສະເລ່ຍ 2.1 ລ້ານກີບ/ຄຄ.

## 4. ກິດຈະກໍາຫລັກ:



- ເພື່ອຍົກລະດັບທັກສະ ແລະ ຄວາມສາມາດ ຂອງ ສະມາຊິກກຸ່ມຜະລິດ ໜໍ່ໄມ້ປ່ອງ, ສໍາຄັນແມ່ນໂອກາດຊະນິດການປຸງແຕ່ງເພື່ອເປັນສ້າງມູນຄ່າເພີ່ມ ໂດຍອີງຕາມຄວາມຕ້ອງການຂອງຕະຫລາດ ແລະ ສ້າງການຮ່ວມມືທີ່ດີ ຫລື ສ້າງເຄືອຂ່າຍກັບບັນດາ ພໍ່ຄ້າ/ແມ່ຄ້າ ຢູ່ພາຍໃນທ້ອງຖິ່ນ ແລະ ພາຍນອກໃນຕ່າງແຂວງອື່ນ;
- ເພື່ອຂະຫຍາຍ ແລະ ສ້າງກຸ່ມຜະລິດຂຶ້ນມາໃໝ່ຕື່ມອີກຢູ່ໃນບັນດາໝູ່ບ້ານອ້ອມຂ້າງໃກ້ຄຽງ, ຊຶ່ງມີຄວາມສົນໃຈເຮັດກິດຈະກໍານີ້ ໃຫ້ເປັນອາຊີບສ້າງລາຍຮັບເສີມ ຕິດພັນກັບ ການປູກໄມ້ປ່ອງ ແລະ ການປົກປັກຮັກສາປ່າໄມ້ປ່ອງທີ່ມີຢູ່ແລ້ວ.
- ສະໜັບສະໜູນຊ່ວຍເຫລືອ ກຸ່ມຜະລິດໜໍ່ໄມ້ປ່ອງ ຂະຫຍາຍການປູກຕົ້ນໄມ້ໄລ່ ແລະ ຕົ້ນໄມ້ຫລອຍ ປະສົມປະສານກັບ ພືດສິນຄ້າອື່ນ ແລະ ຫຍ້າອາຫານສັດ ແບບລະບົບການປູກຝັງ-ລ້ຽງສັດ-ປ່າໄມ້ປະສົມປະສານ ໂດຍພື້ນຖານຕາມແຜນການ FLUMZ ເພື່ອຫັນປ່ຽນຈາກການເຮັດໄຮ່ປູກເຂົ້າ;
- ເພື່ອສົ່ງເສີມສະມາຊິກກຸ່ມຜະລິດ ແລະ ຊຸມຊົນ ເຮັດການປົກປັກຮັກສາ ແລະ ອານຸລັກ ປ່າໄມ້ປ່ອງທໍາມະຊາດ ໂດຍອີງຕາມແຜນການ FLUMZ ເພື່ອປະກອບສ່ວນສ້າງໃຫ້ມີສາມໄຊຊະນະ ຄື: (i) ເພື່ອຍົກລະດັບການປົກຫຸ້ມຂອງປ່າໄມ້ ໄປຕາມຍຸດທະສາດຂອງລັດ, (ii) ເພື່ອປົກປັກຮັກສາສະພາບສິ່ງແວດລ້ອມ ແລະ (iii) ເພື່ອສ້າງລາຍຮັບໂດຍກົງຈາກຜະລິດຕະພັນໜໍ່ໄມ້ ແລະ ລໍາໄມ້ປ່ອງ.
- ເພື່ອຊ່ວຍກຸ່ມຜະລິດ ແລະ ອໍານາດການປົກຄອງທ້ອງຖິ່ນ ເຮັດການສ້າງລະບຽບການຄຸ້ມຄອງ ປ່າໄມ້ປ່ອງທໍາມະຊາດ ແລະ ສວນປູກໄມ້ປ່ອງ ລວມທັງ ການເກັບກູ້, ການປຸງແຕ່ງ ແລະ ການຕະຫລາດ ໄປຕາມທິດຈັດການແບບທຸລະກິດຊຸມຊົນ.

## 5. ຄາດຄະເນຜົນໄດ້ຮັບ:



- ມີຈໍານວນ "ຄອບຄົວຕົວແບບ ທີ່ເປັນ ຄູຝຶກ" ເພີ່ມຂຶ້ນ;
- ມີຈໍານວນກຸ່ມຜະລິດເພີ່ມຂຶ້ນ ແລະ ສ້າງຂຶ້ນໃໝ່ໃນໝູ່ບ້ານອ້ອມຂ້າງໃກ້ຄຽງ;
- ສວນປູກໄມ້ປ່ອງໄດ້ຂະຫຍາຍຕົວຫລາຍຂຶ້ນ ແລະ ໄດ້ມີການຄຸ້ມຄອງດີຂຶ້ນ ຊຶ່ງເຮັດໃຫ້ຜົນຜະລິດໄດ້ດີຫລາຍຂຶ້ນ, ແລະ 90% ຂອງ ສະມາຊິກກຸ່ມຜະລິດໄດ້ມີສວນປູກໜໍ່ໄມ້ເປັນຂອງຕົນເອງ;
- ປ່າໄມ້ປ່ອງທໍາມະຊາດທີ່ມີຢູ່ ໄດ້ຖືກຈັດແບ່ງເຂດ, ໄດ້ຖືກປົກປັກຮັກສາ ແລະ ໄດ້ຖືກຄຸ້ມຄອງ ໃຫ້ເປັນແຫລ່ງ ໄມ້ປ່ອງ ແລະ ໜໍ່ໄມ້ ທີ່ອຸດົມສົມບູນດີຂຶ້ນ;
- ລະບຽບການ (ລະບຽບການຕາມປະເພນີຂອງທ້ອງຖິ່ນ) ກ່ຽວກັບ ປົກປັກຮັກສາ ແລະ ການຄຸ້ມຄອງ ສວນປູກໄມ້ປ່ອງ ແລະ ປ່າໄມ້ປ່ອງທໍາມະຊາດ ເພື່ອຜະລິດເນື້ອໄມ້ ແລະ ໜໍ່ໄມ້, ລວມທັງ ການເກັບກູ້ ແລະ ການຕະຫລາດ ໄດ້ຖືກສ້າງຂຶ້ນແລ້ວໄດ້ຖືກຕົກລົງ ແລະ ມີຜົນບັງຄັບໃຊ້ເຂົ້າໃນການປະຕິບັດເປັນຢ່າງດີ.
- ທັກສະ ແລະ ຄວາມອາດສາມາດດ້ານການປຸງແຕ່ງ ແລະ ການສ້າງມູນຄ່າເພີ່ມ ຂອງຊຸມຊົນການຜະລິດເພີ່ມຂຶ້ນ;
- ການຜະລິດ ແລະ ການປຸງແຕ່ງໜໍ່ໄມ້ ໄດ້ຂະຫຍາຍຕົວ ແລະ ຜົນຜະລິດໄດ້ເພີ່ມຂຶ້ນ 70%;
- ການຕະຫລາດພາຍໃນທ້ອງຖິ່ນ ແລະ ຕ່າງແຂວງໃນທົ່ວປະເທດ ໄດ້ມີການເຕີບໃຫຍ່ຂະຫຍາຍຕົວກ້ວາງຂວາງຂຶ້ນ;
- ໜໍ່ໄມ້ແປຮູບປຸງແຕ່ງ ໄດ້ມີລາຄາຂາຍສູງຂຶ້ນ;

---

*Note: More detail can be provided if the organization/investor is interesting and Proposal Documentation can be developed for further consideration (if required).*